*Souphanouvong University Journal of Multidisciplinary Research and Development*
2024, Vol.9. No. 319-328
https://doi.org/10.69692/SUJMRD0901319

# ວັດທະນະທຳພາສາຂອງຄຳຢືມທີ່ປາກົດໃນວັດຈະນານຸກົມພາສາລາວ

**ບອຍ ດວງຈັນ[1], ຈັນທະພອນ ໄຊວົງສານ, ໄລອ້ອນ ນິ້ມນວນ ແລະ ພູວົງ ໜໍ່ດາລາ**

*ພາກວິຊາຄູພາສາ, ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

[1] ***ຕິດຕໍ່ພົວພັນ:*** *ບອຍ ດວງຈັນ, ພາກວິຊາຄູພາສາ, ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ, ເບີໂທ: +856 20 9891 9778, Email: boyduangchanh@gmail.com*

***ຂໍ້ມູນບົດຄວາມ:***
*ການສົ່ງບົດ: 21 ພະຈິກ 2022*
*ການປັບປຸງ: 17 ມີນາ 2023*
*ການຕອບຮັບ: 27 ມີນາ 2023*

**ບົດຄັດຫຍໍ້**

ບົດຄົ້ນຄວ້ານີ້ມີຈຸດມຸ່ງໝາຍເພື່ອສຳຫຼວດຄຳຢືມຈາກພາສາບາລີທີ່ປາກົດໃນວັດຈະນານຸກົມພາສາລາວ ແລະ ເພື່ອຈັດ ໝວດໝູ່ວັດທະນະທຳທາງພາສາ ແລະ ວິເຄາະຄຳຢືມພາສາບາລີທີ່ປາກົດວັດຈະນານຸກົມພາສາລາວ. ວິທີການສຶກສາຄື ສຳຫຼວດຄຳຢືມຈາກພາສາບາລີທີ່ປາກົດຢູ່ໃນວັດຈະນານຸກົມພາສາລາວ ໂດຍນຳມາຈຳແນກຄຳຕາມລັກສະນະທາງວັດທະນະທຳພາສາ ຕາມແນວການແບ່ງວັດທະນະທຳພາສາ ຂອງໂວຈິລິນ (Voegelins). ຜົນການສຶກສາພົບວ່າ ມີຄຳຢືມຈາກພາສາບາລີຈຳນວນ 3,695 ຄຳ ຈຳແນກອອກເປັນ 4 ໝວດໃຫຍ່ຄື ໝວດຄຳກ່ຽວກັບທຳມະຊາດ, ໝວດຄຳກ່ຽວກັບມະນຸດ ແລະ ພຶດຕິກຳຂອງມະນຸດ, ໝວດຄຳກ່ຽວກັບ ສະຕິປັນຍາ, ອາລົມ, ຄວາມຮູ້ສຶກ ແລະ ຄຸນຄ່າ ແລະ ໝວດຄຳກ່ຽວກັບຄວາມສຳພັນຂອງບຸກຄົນ. ຄຳຢືມທີ່ຈຳແນກລັກສະນະທາງວັດທະນະທຳພາສາ ຕາມແນວການແບ່ງວັດທະນະທຳພາສາຂອງໂວຈິລິນ (Voegelins) ສະຫຼຸບໄດ້ວ່າ ໝວດຄຳກ່ຽວກັບສະຕິປັນຍາ ອາລົມ ຄວາມຮູ້ສຶກ ແລະ ຄຸນຄ່າ ມີຈຳນວນຫຼາຍທີ່ສຸດ ຄືມີ 1,355 ຄຳ ຄິດໄລ່ເທົ່າກັບ 36.67 ສ່ວນຮ້ອຍ. ຄຳກ່ຽວກັບລັດທິສາສະໜາ ຕຳນານ ຄວາມເຊື່ອ ພິທີກຳ ອຸປະກອນ ແລະ ສະຖານທີ່ໃນການປະກອບກິດຈະກຳນັ້ນໆ ມີຈຳນວນຫຼາຍທີ່ສຸດ ຄືມີ 926 ຄຳ ຄິດໄລ່ເທົ່າກັບ 25.06 ສ່ວນຮ້ອຍ. ໝວດຄຳກ່ຽວກັບມະນຸດ ແລະ ພຶດຕິກຳຂອງມະນຸດ ມີຈຳນວນໜ້ອຍທີ່ສຸດ ຄືມີ 617 ຄຳ ຄິດໄລ່ເທົ່າກັບ 16.69 ສ່ວນຮ້ອຍ ຄຳກ່ຽວກັບການແຕ່ງກາຍ ແລະ ເຄື່ອງປະດັບ ໝວກ ຊິ່ງຜົມ ເກີບ ອຸປະກອນ ແລະ ວິທີການແຕ່ງກາຍລວມທັງການທຳຄວາມສະອາດຮ່າງກາຍ ໜ້ອຍທີ່ສຸດ ຄືມີ 27 ຄຳ ຄິດໄລ່ເທົ່າກັບ 0.73 ສ່ວນຮ້ອຍ.

**ຄຳສັບສຳຄັນ:** *ວັດທະນະທຳພາສາ, ຄຳຢືມ, ພາສາບາລີ.*

# Language Culture of Loan Words in Lao Language Dictionary

**Boy DUANGCHAN[1], Chanthaphone SAYVONGSAN, Laion NIMNUAN and Phouvong NORDALA**

*Department of Language Pedagogy, Faculty of Education, Souphanouvong University, Lao PDR*

*[*]**Correspondence:** Boy DUANGCHAN, Department of Language Pedagogy, Faculty of Education, Souphanouvong University, Tel: +85620 98919778, Email: boyduangchanh@gmail.com*

***Article Info:***
*Submitted: Nov 21, 2022*
*Revised: Mar 17, 2023*
*Accepted: Mar 27, 2023*

**Abstract**

The research simed to investigates the loan words from the Pali language that appears in the Lao language dictionary and to categorize its language culture that appears in the language dictionary. The study was conducted through an analysis of the loan words from the Pali language that appears in the Lao language dictionary to classify the words based on the cultural characteristics of the language, according to the Voegelins' language culture division. The results revealed that there are 3,695 loan words from the Pali language. They are divided into four main categories: 1) nature, 2) human and human behavior, 3) wisdom, emotions, feelings and values, and 4) individual relationship. The loan words based on Voegelins' language culture division, can be concluded as follows: the category of wisdom, emotions, feelings, and values takes the highest proportion with the number of 1,355 words, accounting for 36.67 per cent. There are 926 words about the religiousness, legends, beliefs, rituals, ceremonies, instruments, and the places for ceremony, accounting for 25.06 per cent. There are 617 words in the human beings and human behavior

category, accounting for 16.69 per cent. However, there are only 27 words about dressing, accessories, hats, hairstyles, shoes and care accounting for 0.73 per cent.
**Keywords:** *Language Culture, loan words, Pali Language.*

## 1. ພາກສະເໜີ

ວັດທະນະທຳ ແມ່ນບັນດາຄຸນຄ່າທາງດ້ານວັດຖຸ ແລະ ຈິດໃຈທີ່ມວນມະນຸດສ້າງຂຶ້ນໃນຂະບວນວິວັດແຕ່ລະໄລຍະປະຫວັດສາດແຫ່ງການກຳເນີດ, ຄົງຕົວ ແລະ ຂະຫຍາຍຕົວຂອງສັງຄົມມະນຸດ ພັກປະຊາຊົນປະຕິວັດລາວ ຍາມໃດກໍ່ໃຫ້ຄວາມສຳຄັນ ແລະ ຄວາມເອົາໃຈໃສ່ຕໍ່ວຽກງານວັດທະນະທຳ ໂດຍຖືວ່າ ວັດທະນະທຳ ແມ່ນຄຸນລັກສະ ນະ ແລະ ເປັນປັດໃຈພື້ນຖານຂອງການດຳລົງຄົງຕົວຂອງຊາດ, ແມ່ນກຳລັງດັນ ແລະ ຈຸດໝາຍຂອງການພັດທະນາສັງຄົມຕາມທິດສັງຄົມນິຍົມ ບົນພື້ນຖານທິດນຳ "ຢາກສ້າງສັງຄົມນິຍົມ ຕ້ອງມີຄົນສັງຄົມນິຍົມ" ພັກເຮົາໄດ້ນຳພາຊີ້ນຳການສ້າງ ແລະ ເສີມຂະຫຍາຍຄວາມສີວິໄລທາງດ້ານວັດທະ ນະທຳ ໃຫ້ເປັນພື້ນຖານແຫ່ງຊີວິດສັງຄົມຂອງຊາດລາວ, ສ້າງວັດທະນະທຳໃຫ້ມີລັກສະນະຊາດ, ລັກສະນະມະຫາຊົນ ແລະ ລັກສະນະກ້າວໜ້າ(The resolution on increasing the party's leadership in cultural affairs during the Vientiane period, 2021) ພາສາລາວເປັນພາຫະນະຖ່າຍທອດວັດທະນະທຳ ແລະ ຄວາມຈະເລີນຕ່າງໆຂອງຊາດລາວ ຈາກຄົນຮຸ່ນໜຶ່ງໄປຍັງອີກຄົນຮຸ່ນໜຶ່ງສືບຕໍ່ເນື່ອງກັນໄປເລື້ອຍໆ ໂດຍບໍ່ຂາດສາຍ. ດັ່ງນັ້ນ, ວັດທະນະທຳອັນມີ ຄ່າຂອງຊາດ ເຊິ່ງໄດ້ແກ່ ບົດຮ້ອງ, ບົດເພງ, ກາບກອນ, ໂຄງສານ, ສຸພາສິດ, ຄຳຜະຫຍາ, ກອນຂັບລຳພື້ນເມືອງ, ວັນນະຄະດີສິລະປະກຳຕ່າງໆ ຕະຫຼອດຮອດສິລະປະ, ວັດຖຸ ບູຮານ, ປູຊະນີຍະສະຖານ, ການປະດິດສ້າງສິ່ງຂອງເຄື່ອງ ໃຊ້ເພື່ອຮັກສາໄວ້ໃຫ້ສືບທອດຕໍ່ໄປ ພາສາລາວມີຄວາມສຳຄັນຕໍ່ການປະກອບອາຊີບກິດຈະກຳຕ່າງໆ ບາງອາຊີບກໍອາ ໄສພາສາລາວໂດຍກົງເຊັ່ນ: ນັກຮຽນ, ຜູ້ປະກອບການທາງວິທະຍຸ ແລະ ໂທລະພາບ, ນັກຂຽນ ແລະ ອື່ນໆ ບາງອາຊີບກໍ່ອາໄສພາສາລາວໂດຍທົ່ວໄປເຊັ່ນ: ຜູ້ຄ້າຂາຍ, ນາຍແພດ, ກຳມະກອນ...ການໃຊ້ພາສາກໍເປັນສິລະປະອັນໜຶ່ງເຊິ່ງຈະຕ້ອງຄຳນຶງເຖິງ ກາລະ, ເທສະ, ຖານະຂອງບຸກຄົນ ແລະ ຄວາມເໝາະສົມໃນດ້ານອື່ນໆ (Suvanvisai & Sisulad, 2008).

ໃນແງ່ພາສາສາດ, ການຮັບເອົາຄຳ ຫຼື ການຢືມຄຳ ແມ່ນປາກົດການໜຶ່ງໃນຂະບວນການພາສາເຊິ່ງເປັນປາ ກົດການທີ່ມີໃນທຸກຊາດທຸກພາສາ. ເລໂອນາດ ບລູມຟີນ (Bloomfield, L., 1985) ນັກພາສາສາດຜູ້ລິເລີ່ມຄົ້ນຄວ້າຂະບວນການຮັບເອົາພາສາໜຶ່ງເຂົ້າໄປສູ່ອີກພາສາໜຶ່ງ ໄດ້ແບ່ງການຢືມຄຳຍ້ອນສາເຫດສາມຢ່າງເຊັ່ນ ສາເຫດທາງວັດທະນະທຳ (Cultural borrowing), ສາເຫດຄວາມໃກ້ຊິດ (Intimate borrowing) ແລະ ສາເຫດການຢືມພາສາຖິ່ນ (Dialect borrowing) (Xayavong, 2005). ນອກຈາກນີ້, ນັກຄົ້ນຄວ້າທາງພາສາສາດຕ່າງປະເທດຍັງໄດ້ກ່າວອ້າງໄວ້ຫຼາຍຢ່າງເຊັ່ນວ່າ ວິໄລສັກ ກິ່ງຄຳ, ນັກຄົ້ນຄວ້າໄທກ່າວວ່າ ການຢືມຄຳທີ່ພາໃຫ້ພາສາປ່ຽນແປງໄປຍ້ອນສາເຫດເຊັ່ນ: ເຈົ້າຂອງພາສາມີຄວາມສຳພັນທາງດ້ານເຊື້ອຊາດໃກ້ຄຽງ, ຄວາມສຳພັນທາງດ້ານປະຫວັດສາດ, ການຕິດຕໍ່ຊື້ຂາຍ, ອິດທິພົນທາງດ້ານສາສະໜາ, ການປ່ຽນແປງທາງດ້ານວັດທະນະທຳ, ຄວາມຈະເລີນດ້ານການສຶກສາ, ຄວາມຈະເລີນດ້ານເຕັກໂນໂລຊີ ແລະ ການເຮັດທຸລະກິດສ່ວນຕົວຂອງບຸກຄົນລະຫວ່າງຊາດ (Sukkhasem, 2017). ນອກຈາກນັ້ນ, ນັກຄົ້ນຄວ້າພາສາສາດຍັງໄດ້ໃຫ້ຄວາມໝາຍຂອງຄຳຢືມວ່າ ການຢືມຄຳ ໝາຍເຖິງພາສາໜຶ່ງນຳເອົາຄຳ ຫຼື ລັກສະນະທາງພາສາໜຶ່ງໄປໃຊ້ໃນພາສາຂອງຕົນ ພາສາທີ່ຖືກຢືມມານັ້ນມັກຈະຖືກປ່ຽນແປງຮູບຄຳ, ສຽງ ແລະ ຄວາມໝາຍໃນພາສານັ້ນໃໝ່ ເພື່ອຄວາມສະດວກໃນການອອກສຽງ ແລະ ເປັນໄປຕາມລັກສະນະສຳຄັນຂອງພາສາຜູ້ຢືມ (ວິໄລສັກ ກິ່ງຄຳ, 2556) ຈາກຂໍ້ຄວາມຂ້າງເທິງນັ້ນສອດຄ່ອງກັບການອະທິບາຍຄຳຢືມຂອງ Petcharat & Thongbai (2556) ວ່າ ຄຳຢືມເປັນລັກສະນະທຳມະຊາດຂອງພາສາ ຍ່ອມມີການຍິບຢືມຄຳຂອງພາສາຕ່າງປະເທດມາໃຊ້ປະປົນກັນພາສາຂອງສະເໜີ ການຢືມຄຳຈາກພາສາ

ອື່ນມາໃຊ້ເປັນການຊ່ວຍໃຫ້ມີຖ້ອຍຄຳໃຊ້ຫຼາຍຂຶ້ນ ແລະ ເພື່ອຄວາມສະດວກໃນການຕິດຕໍ່ສື່ສານ ການຢືມຄຳມາໃຊ້ບໍ່ມີຂອບເຂດຈຳກັດຕາຍຕົວອາດຈະຢືມສຽງ ຢືມຄຳ ຫຼື ຢືມໄວຍາກອນກໍໄດ້ ຂຶ້ນຢູ່ກັບຄວາມຕ້ອງການ ແລະ ຄວາມສະດວກຂອງຜູ້ໃຊ້. ພາສາບາລີ-ສັນສະກິດຖືໄດ້ວ່າເປັນພາສາທີ່ມີອິດທິພົນຕໍ່ພາສາລາວຫຼາຍທີ່ສຸດ ແລະ ມີຄວາມສຳພັນກັບລາວມາເປັນເວລາຊ້ຳນານ ຄົນລາວໃຊ້ຄຳຢືມພາສາບາລີ ສັນສະກິດ ທັງພາສາເວົ້າໃນຊີວິດປະຈຳວັນ ການຕັ້ງຊື່ ການສຶກສາ ແລະ ການແຕ່ງຄຳປະພັນ ເຊິ່ງສາເຫດສຳຄັນທີ່ເຮັດໃຫ້ຄຳຢືມພາສາບາລີ-ສັນສະກິດເຂົ້າມາປະປົນໃນພາສາລາວຄື ສາສະໜາ ປະເພນີ ວັດທະນະທຳ ກ່າວຄື ຄົນລາວ ສ່ວນຫຼາຍນັບຖືສາສະໜາພຸດ ຫຼັກຄຳສອນຂອງພະພຸດທະເຈົ້າໄດ້ຈາລຶກໄວ້ດ້ວຍພາສາບາລີ-ສັນສະກິດ ໃຊ້ເຜີຍແຜ່ຄຳສອນຂອງພະພຸດທະເຈົ້າ ດ້ວຍອິດທິພົນດັ່ງກ່າວເຮັດໃຫ້ພາສາລາວມີການປ່ຽນແປງຫຼາຍປະການເຊັ່ນ ມີຄຳຫຼາຍພະຍາງ. ນອກຈາກນີ້ ລາວເຮົາຍັງໄດ້ໃຊ້ພາ ສາບາລີ-ສັນສະກິດບັນຍັດສັບອີກດ້ວຍ (Mapa, 2559) ການຈັດແບ່ງໝວດໝູ່ທາງຄວາມໝາຍ ການສຶກສາເລື່ອງການແບ່ງໝວດໝູ່ທາງຄວາມໝາຍສຶກສາຈາກເກນແນວຄິດຂອງ ໄທງາມ ປະມວນສິນໄຊ ໂດຍອ້າງອີງຈາກ Voegelins (1957) ເປັນພື້ນຖານເຊິ່ງຈຳແນກໝວດໝູ່ທາງຄວາມໝາຍ ອອກເປັນ 4 ໝວດໃຫຍ່ ປະກອບດ້ວຍໝວດຄຳກ່ຽວກັບທຳມະຊາດ, ໝວດຄຳກ່ຽວກັບມະນຸດ ແລະ ພຶດຕິກຳຂອງມະນຸດ, ໝວດຄຳກ່ຽວກັບສະຕິປັນຍາອາລົມ ຄວາມຮູ້ສຶກ ແລະ ຄຸນຄ່າ ແລະ ໝວດຄຳກ່ຽວກັບຄວາມສຳພັນຂອງບຸກຄົນ; ຄະນະຄົ້ນຄວ້າ ສົນໃຈສຶກສາຄຳຢືມພາສາບາລີທີ່ປາກົດຢູ່ໃນວັດຈະນານຸກົມພາສາລາວ, ວັດທະນະທຳພາສາຂອງຄຳຢືມ ແລະ ການວິເຄາະຄວາມໝາຍການສຶກສາດັ່ງກ່າວມີຜູ້ທີ່ສຶກສາຕາມໃນແນວທາງຂ້າງເທິງເຊັ່ນ: ໄທງາມ ປະມວນສິນໄຊ ສຶກສາວັດທະນະທຳຂອງຄຳຢືມທີ່ປາກົດໃນພົດຈະນານຸກົມ ສະບັບຣາຊບັນດິດສະຖານ ພ.ສ 2525, ອໍລະພິນ ໂລກັດຈະລິຍາ ສຶກສາການວິເຄາະການປ່ຽນແປງຄຳສັບໃນພົດຈະນານຸກົມສະບັບລາຊະບັນດິດສະຖານ ພ.ສ 2493 ແລະ ພ.ສ 2525, ເປູມຣິດີ ເຊ່ງຍີ່ ສຶກສາຄຳສັບໃນພົດຈະນານຸກົມຄຳໃໝ່ສະບັບຣາຊະບັນດິດສະ ຖານ ເຫຼັ້ມ 1-3 ພ.ສ 2552-2554, ຈິດດາ ງາມສຸດທິ ສຶກສາຄຳຢືມພາສາສັນສະກິດໃນພາສາໄທ ແລະ ພາສາຕາກາລັອກ.

ຈາກການສຶກສາປະເດັນຂ້າງເທິງນັ້ນ ຄະນະຄົ້ນຄວ້າສົນໃຈສຶກສາວັດທະນະທຳພາສາຂອງຄຳຢືມທີ່ປາກົດໃນວັດຈະນານຸກົມພາສາລາວຂອງ ດຣ ທອງຄຳ ອ່ອນມະນີສອນ, 2008 ໂດຍມີຈຸດປະສົງ 1.) ເພື່ອສຳຫຼວດຄຳຢືມຈາກພາສາບາລີທີ່ປາກົດໃນວັດຈະນານຸກົມພາສາລາວຂອງ ດຣ. ທອງຄຳ ອ່ອນມະນີສອນ, 2008. ແລະ 2.) ເພື່ອຈັດໝວດໝູ່ວັດທະນະທຳທາງພາສາ ແລະ ວິເຄາະຄຳຢືມພາສາບາລີທີ່ປາກົດວັດຈະນານຸກົມພາສາລາວຂອງ ດຣ ທອງຄຳ ອ່ອນມະນີສອນ, 2008.

## 2. ອຸປະກອນ ແລະ ວິທີການ

### 2.1 ຂອບເຂດຂອງການຄົ້ນຄວ້າ

ຄະນະຄົ້ນຄວ້າກຳນົດຂອບເຂດການຄົ້ນຄວ້າ ດັ່ງນີ້

1.ສຳຫຼວດຄຳຢືມພາສາບາລີທີ່ປາກົດໃນວັດຈະນານຸກົມພາສາລາວ ດຣ. ທອງຄຳ ອ່ອນມະນີສອນ ເນື່ອງຈາກວ່າມີຄຳຢືມມາຈາກຫຼາຍພາສາຢູ່ເປັນຈຳນວນຫຼາຍ ເຊິ່ງມີທັງຄຳບາລີ-ສັນສະກິດ, ສັນສະກິດ-ບາລີ ແລະ ຄຳຢືມມາຈາກພາສາຕ່າງປະເທດ. ດັ່ງນັ້ນ, ຄະນະຄົ້ນຄວ້າຈຶ່ງເລືອກສຶກສາສະເພາະຄຳຢືມພາສາບາລີ ທີ່ປາກົດຢູ່ໃນວັດຈະນານຸກົມພາສາລາວຂອງ ດຣ. ທອງຄຳ ອ່ອນມະນີສອນ ເທົ່ານັ້ນ.

2. ຈັດໝວດໝູ່ວັດທະນະທຳພາສາ ແລະ ວິເຄາະວິເຄາະຄຳຢືມພາສາບາລີທີ່ປາກົດໃນວັດຈະນານຸກົມພາສາລາວຂອງ ດຣ. ທອງຄຳ ອ່ອນມະນີສອນ ປີ 2008 ຕາມເກນຂອງ (Voegelins, 1975) ໂດຍອ້າງອີງຈາກ Tai Ngam Pramualsinchai (2550) ເປັນພື້ນຖານໃນການຈຳແນກໝວດໝູ່ທາງຄວາມໝາຍອອກເປັນ 4 ໝວດໃຫຍ່ຄື: ໝວດຄຳກ່ຽວກັບທຳມະຊາດ, ໝວດຄຳກ່ຽວກັບມະນຸດ ແລະ ພຶດຕິກຳຂອງມະນຸດ, ໝວດຄຳກ່ຽວກັບສະຕິ

ປັນຍາ ອາລົມ ຄວາມຮູ້ສຶກ ແລະ ຄຸນຄ່າ ແລະ ໝວດຄຳກ່ຽວກັບຄວາມສຳພັນຂອງບຸກຄົນ.

### 2.2 ວິທີດຳເນີນການຄົ້ນຄວ້າ

### 2.2.1 ສຶກສາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

ໂດຍສຶກສາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງກັບການຄົ້ນຄວ້າກ່ຽວກັບຄຳຢືມ, ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງກັບວັດຈະນານຸກົມ, ງານວິໄຈທີ່ກ່ຽວຂ້ອງກັບຄຳ ແລະ ການສຶກສາຄຳໃນວັດຈະນານຸກົມ

### 2.2.2 ການຮວບຮວມຂໍ້ມູນເບື້ອງຕົ້ນ

- ສຳຫຼວດ, ຈັດເກັບຄຳຢືມພາສາບາລີທີ່ປາກົດໃນວັດຈະນານຸກົມພາສາລາວຂອງ ດຣ. ທອງຄຳ ອ່ອນມະນີສອນ, 2008. ພົບຄຳບາລີຈຳນວນ 3.695 ຄຳ.

- ຮວບຮວມຄຳສັບພາສາບາລີ ທີ່ປາກົດໃນວັດຈະນານຸກົມພາສາລາວຂອງ ດຣ ທອງຄຳ ອ່ອນມະນີສອນ, 2008 ໂດຍການຈັດເກັບໃນຮູບແບບການແບ່ງໝວດໝູ່ວັດທະນະທຳພາສາ ດັ່ງຕົວຢ່າງຕໍ່ໄປນີ້:

**1). ໝວດຄຳກ່ຽວກັບທຳມະຊາດ ໄດ້ແກ່**

ຄຳກ່ຽວກັບພູມປະເທດ ຊັບພະຍາກອນທຳມະຊາດທີ່ບໍ່ມີຊີວິດ ຄຸນສົມບັດ ອຸປະກອນ ແລະວິທີນຳຊັບພະຍາກອນທຳມະຊາດມາໃຊ້ ດັ່ງຕົວຢ່າງຕໍ່ໄປນີ້:

**ນິນ** ນ. ແກ້ວຢ່າງດີມີສີເຫຼືອມ, ສີດຳ, ສີແຫຼ້ ໜ.491

**ສາຄອນ** ນ. ມະຫາສະໝຸດ, ທະເລ, ແມ່ນ້ຳ ໜ.256

**ພູມ** ນ. ແຜ່ນດິນ, ພື້ນ, ຊັ້ນ ໜ.621

**2). ໝວດຄຳກ່ຽວກັບມະນຸດ ແລະ ພຶດຕິກຳຂອງມະນຸດ ໄດ້ແກ່**

ຄຳກ່ຽວກັບອະໄວຍະວະຕ່າງໆ ພາວະການປ່ຽນແປງພາຍໃນຮ່າງກາຍ ດັ່ງຕົວຢ່າງຕໍ່ໄປນີ້

**ກະບານ** ນ. ກະດູກຫົວ, ກະດູກຫົວເອີ້ນກະບານຫົວ ຢ່າງວ່າ ມີຮ່າງເຮົາເທັງຂ້າມ ກະບານຫົວສູໄຕ່ໄປລື (ສິນ) ໜ. 20

**ອັງຄຸລີ** ນ. ນິ້ວມື, ຂໍ້ມື, ນິ້ວກາງ ໜ. 835

**ໂຍນີ** ນ. ອະໄວຍະວະທີ່ລັບຂອງຜູ້ຍິງ ຫຼື ສັດຕົວແມ່ ໜ. 345

**3). ໝວດຄຳກ່ຽວກັບສະຕິປັນຍາ ອາລົມ ຄວາມຮູ້ສຶກ ແລະ ຄຸນຄ່າ ໄດ້ແກ່**

ຄຳກ່ຽວກັບລັດທິສາສະໜາ ຕຳນານ ຄວາມເຊື່ອ ພິທີກຳ ອຸປະກອນ ແລະ ສະຖານທີ່ໃນການປະກອບກິດຈະກຳນັ້ນໆ ດັ່ງຕົວຢ່າງຕໍ່ໄປນີ້

**ສູນຍະນິຍົມ** ນ. (ສາສະໜາ) ລັດທິທີ່ຖືວ່າຄົນ ແລະ ສັດເກີດເທື່ອດຽວຕາມແລ້ວສູນ, ບຸນບາບ, ພະເຈົ້ານະຮົກ, ສະຫວັນບໍ່ມີ ໜ. 300

**ອຸບັດຊາ** ນ. ພະເຖລະຜູ້ເປັນປະທານການບວດກຸລະບຸດ ໃນພຸດທະສາສະໜາ ໜ. 823

**ອໍລະຫັນ** ນ. ຜູ້ສຳເລັດທຳວິເສດໃນທາງພຸດທະສາສະໜາ, ຜູ້ເຖິງນິບພານ ໜ.82

**4). ໝວດຄຳກ່ຽວກັບຄວາມສຳພັນຂອງບຸກຄົນ ໄດ້ແກ່**

ຄຳກ່ຽວກັບການສົງຄາມ ການເມືອງ ການປົກຄອງ ວິທີການ ອຸປະກອນທີ່ກ່ຽວຂ້ອງ ແລະ ຕຳແໜ່ງໜ້າທີ່

**ກະລິຍຸກ** ນ. ຍຸກຮ້າຍ, ຍກທີ່ຄົນຮົບເລວຂ້າຟັນກັນ ເຫັນຊີວິດຄົນຄືຊີ້ນຄືປາ ຫຼື ຍຸກທີ່ເຕັມໄປດ້ວຍໂລກໄພໄຂ້ເຈັບ. ໜ້າ 25

**ສະຫະປະຊາຊາດ** ນ. ອົງການລະຫວ່າງປະເທດທີ່ຖືກສ້າງຕັ້ງຂຶ້ນ ພາຍຫຼັງມະຫາສົງຄາມໂລກຄັ້ງທີ 2 ເພື່ອຮ່ວມກັນແກ້ບັນຫາຫຍຸ້ງຍາກ ທາງດ້ານເສດຖະກິດ, ສັງຄົມ ວັດທະນະທຳ ແລະ ມະນຸດສະທຳ ໜ້າ 251

**ອະທິການ** ນ. ອຳນາດ, ການປົກຄອງ, ຕຳແໜ່ງໜ້າທີ່, ກິດຈະການ. ໜ

## 2.3 ການວິເຄາະຂໍ້ມູນ

1. ການວິເຄາະຂໍ້ມູນຄຳຢືມພາສາບາລີທີ່ປາກົດໃນວັດຈະນານຸກົມພາສາລາວ ຂອງ ດຣ ທອງຄຳ ອ່ອນມະນີສອນ, 2008. ໃຊ້ຂໍ້ມູນຈາກການເກັບຂໍ້ມູນ ເບື້ອງຕົ້ນ.

2.ການວິເຄາະຂໍ້ມູນວັດທະນະທຳພາສາຄຳຢືມພາສາບາລີໃນເລື່ອງໝວດໝູ່ທາງຄວາມໝາຍຂອງຄຳສັບໃນວັດຈະນານຸກົມພາສາລາວຂອງ ດຣ ທອງຄຳ ອ່ອນມະນີສອນ, 2008.

3. ສະຫຼຸບຜົນການສຶກສາ, ອະພິປາຍຜົນ ແລະ ຂໍ້ສະເໜີແນະ

## 3. ຜົນໄດ້ຮັບ

ການສຶກສາວັດທະນະທຳພາສາຂອງຄຳຢືມ ທີ່ປາກົດໃນວັດຈະນານຸກົມພາສາລາວ ມີຈຸດປະສົງ ເພື່ອສຳຫຼວດຄຳຢືມຈາກພາສາບາລີ ທີ່ປາກົດໃນວັດຈະນານຸກົມພາສາລາວ ເຊິ່ງກໍລະນີສຶກສາແມ່ນຂອງ ດຣ. ທອງຄຳ ອ່ອນມະນີສອນ , ປີ 2008. ແລະ ເພື່ອຈັດໝວດໝູ່ວັດທະນະທຳທາງພາສາ ແລະ ວິເຄາະຄຳຢືມພາສາບາລີທີ່ປາກົດວັດຈະນານຸກົມພາສາລາວ. ຈາກການສຶກສາ ພົບວ່າ ຄຳຢືມຈາກສາບາລີທັງໝົດຈຳນວນ 3,695 ຄຳ. ໂດຍຈຳແນກລັກສະນະວັດທະນະທຳພາສາແບ່ງອອກເປັນ 4 ໝວດໃຫຍ່ໄດ້ແກ່:

### 3.1 ໝວດຄຳກ່ຽວກັບທຳມະຊາດ ປະກອບມີ

1) ຄຳກ່ຽວກັບພູມປະເທດ ຊັບພະຍາກອນທຳມະຊາດທີ່ບໍ່ມີຊີວິດ ຄຸນສົມບັດ ອຸປະກອນ ແລະວິທີນຳຊັບພະຍາກອນທຳມະຊາດມາໃຊ້.

**ຄິລານະປັດໃຈ** ນ ຢາສຳລັບຄົນໄຂ້, ຢາຮັກສາໂລກ, ຢາແກ້ພະຍາດ, ປັດໃຈສຳລັບຄົນໄຂ້ ໜ.148

**ຄູຫາ** ນ ຖ້ຳ ເຫື້ອມຫີນ ໜ.149

2) ຄຳກ່ຽວກັບທ້ອງຟ້າ ດວງດາວ ອຸນຫະພູມ ລະດູການ ປາກົດການທຳມະຊາດທີ່ເກີດຈາກທ້ອງຟ້າ ຄຸນສົມບັດ ແລະ ວິທີການສຶກສາກ່ຽວກັບທ້ອງຟ້າ.

**ຄິມຫັນ-ຄິມຫັນຕາ** ນ. ປາຍລະດູຮ້ອນ ໜ.177

**ຈັນທະຄະຕິ** ນ. ການເດີນທາງຂອງພະຈັນ, ທາງຂອງພະຈັນ, ວິທີນັບວັນຕາມທາງພະຈັນ ໜ.229

3) ຄຳກ່ຽວກັບພະລັງງານ, ຄວາມຮ້ອນ, ແສງສະຫວ່າງ, ໄຟ, ວັດສະດຸ ອຸປະກອນທີ່ເຮັດໃຫ້ເກີດພະລັງງານ.

**ປະພາ** ນ. ແສງ, ແສງສະຫວ່າງ, ແສງໄຟ ໜ.532

**ອັກຄີໄພ** ນ. ໄພທີ່ເກີດຈາກໄຟ, ໄຟໄໝ້ ໜ.832

4) ຄຳກ່ຽວກັບສັດ, ຊະນິດ, ປະເພດ, ອະໄວຍະວະຕ່າງໆຂອງສັດ ການລ້ຽງດູ, ການລ່າສັດ, ອຸປະກອນໃນການລ້ຽງ ແລະ ການລ່າສັດ.

**ມັດສາຊາດ** ນ. ພວກປາ ໝູ່ປາໜ.653

**ປັກສາ-ປັກສີ-ປັກສິນ** ນ. ສັດມີປີກ, ນົກ ໜ.545

5) ຄຳກ່ຽວກັບພືດ, ຊະນິດ, ປະເພດ, ສ່ວນປະກອບຂອງພືດ, ການປູກ, ການບຳລຸງຮັກສາ, ການຂະຫຍາຍພັນ ແລະ ອຸປະກອນໃນການເພາະປູກ ແລະ ຂະຫຍາຍພັນ.

**ປະທຸມ** ນ. ດອກບົວ, ບົວຫຼວງ ໜ. 531

**ສັດຕະບົງ** ນ. ຊື່ດອກບົວແນວໜຶ່ງດອກສີແດງ ແລະ ປ້ອມ ໜ.291

6) ຄຳກ່ຽວກັບວັນ, ເວລາ.

**ສັງກາດ, ສັກກະຫຼາດ** ນ. ປີແຕ່ລະປີ ໜ. 280

**ສົກ** ນ. ປີ, ວິທີນັບປີ ໜ.279

7) ຄຳກ່ຽວກັບທິດທາງ, ຈຳນວນ, ຂະໜາດ, ບໍລິມາດ, ມາດຕາຊັ່ງ, ຕວງ, ວັດ ລະຍະທາງ, ລຳດັບທີ່ ອຸປະກອນ ແລະ ວິທີການໃນການຊັ່ງ ຕວງ ວັດ ແລະ ການຄຳນວນ.

**ຄະນິດ** ນ. ການນັບ, ການຄຳນວນ, ການຕວງ, ວິຊາເລກ ໜ.144

**ຄາວຸດ** ນ. ມາດຕາວັດແທກບູຮານແບບປາລີ ກຳນົດໄລຍະໄກ ຊື່ວສຽງງົວຮ້ອງ ຄືທໍ່ກັບ 4000 ທັນທະ ຫຼື ໂກສະ ຫຼື ທໍ່ກັບເສດໜຶ່ງສ່ວນສີ່ຂອງໂຍດ ໜ.147

**3.2 ໝວດຄຳກ່ຽວກັບມະນຸດ ແລະ ພຶດຕິກຳຂອງມະນຸດ ປະກອບມີ**

1) ຄຳກ່ຽວກັບອະໄວຍະວະຕ່າງໆ ພາວະການປ່ຽນແປງພາຍໃນຮ່າງກາຍ.

**ສີສະ** ນ. ຫົວ ໜ.262

**ໂສຕະປະສາດ** ນ. ປະສາດຫູ ໜ.270

2) ຄຳກ່ຽວກັບພັດທະນາການຂອງຮ່າງກາຍ ສຸຂະພາບ ການຮັກສາພະຍາບານ ອຸປະກອນ ແລະ ວິທີການຮັກສາ ພະຍາບານ.

**ເພສັດຊະກຳ** ນ. ການປຸງແຕ່ງຢາ, ການຜະສົມຢາ ໜ.600

**ໂພຊະນາການ** ນ. ສານອິງປະກອບສຳຄັນຂອງອາຫານ ທີ່ເຮັດໃຫ້ອາຫານມີຄຸນຄ່າໃນການບຳລຸງລ້ຽງ ຮ່າງກາຍ ໜ. 602

3) ຄຳກ່ຽວກັບການແຕ່ງກາຍ ແລະ ເຄື່ອງປະດັບ ໝວກ ຊົງຜົມ ເກີບ ອຸປະກອນ ແລະ ວິທີການແຕ່ງກາຍ ລວມທັງການທຳຄວາມສະອາດຮ່າງກາຍ.

**ສັງວານ** ນ. ເຄື່ອງປະດັບປະດາເອ້ຍ້ອງ, ສາຍສ້ອຍທີ່ໃສ່ບ່ຽງບ້າຍ ໜ. 283

**ພູສິດ** ນ. ເຄື່ອງເອ້, ເຄື່ອງປະດັບ ໜ. 599

4) ຄຳກ່ຽວກັບການຮັບຄວາມຮູ້ສຶກທາງປະສາດສຳຜັດຂອງຮ່າງກາຍ ເຊັ່ນ ການເຫັນ ຮູ້ລົດ ໄດ້ກິ່ນ ໄດ້ຍິນ ການສະແດງຄວາມເປັນເຈົ້າຂອງ ການກະທົບກະແທກ ການປົກປິດເປີດເຜີຍ.

**ໂລກາມິດ** ນ. ເຄື່ອງດຶງດູດຈິດໃຈ, ເຄື່ອງລໍ້ລວງໃຈທີ່ຕິດພັນຢູ່ກັບໂລກ ໄດ້ແກ່ຮູບ, ສຽງ, ກິ່ນ, ລົດ ແລະ ສຳຜັດ ໜ.682

**ວິຈິດ** ວ. ງາມ, ປະຫຼາດ,ງາມຢາດຍ້ອຍ ໜ.715

5) ຄຳກ່ຽວກັບກິດຈະກຳ ການເຄື່ອນໄຫວ ແລະ ການເຄື່ອຍຍ້າຍໃນລັກສະນະຕ່າງໆ.

**ກະລະນີຍະກິດ** ນ. ວຽກງານກິດຈະການທີ່ຄວນທຳ, ທຸລະໜ້າທີ່ອັນຄວນເຮັດຄວນທຳ ໜ.24

**ກີລາ** ນ. ການຫຼິ້ນເພື່ອອອກກຳລັງກາຍ ຫຼື ຄວາມມ່ວນຊື່ນ ປະເພດຕ່າງໆ ໜ. 33

**3.3 ໝວດຄຳກ່ຽວກັບສະຕິປັນຍາ ອາລົມ ຄວາມຮູ້ສຶກ ແລະ ຄຸນຄ່າ ປະກອບມີ**

1) ຄຳກ່ຽວກັບຈິດໃຈ ອາລົມ ຄວາມຮູ້ສຶກນຶກຄິດ.

**ກະຕະເວທີ** ນ. ການຮູ້ຈັກບຸນຄຸນຂອງທ່ານຜູ້ມີພະຄຸນຕໍ່ຕົນ, ການຕອບແທນຄຸນ. ໜ. 12

**ຈິດຕະເວທະນາ** ນ. ຄວາມທຸກໃຈ. ຄວາມບໍ່ສະບາຍໃຈ, ຄວາມອັດອັ້ນຕັນໃຈ ໜ.226

2) ຄຳກ່ຽວກັບຄຸນຄ່າ ຄ່ານິຍົມ ແລະ ການຮຽນຮູ້.

**ສະຫະສຶກສາ** ນ. ການສຶກສາທີ່ໃຫ້ນັກຮຽນທັງຊາຍ ແລະ ຍິງຮຽນຮ່ວມກັນໃນສະຖານສຶກສາ ດຽວກັນ ໜ. 251

**ປະລະມາຈານ** ນ. ອາຈານຜູ້ເປັນເອກ ຫຼືຍອດຢ້ຽມໃນທາງວິຊາຄວາມຮູ້ວິຊາໃດວິຊາໜຶ່ງ ໜ. 533

3) ຄຳກ່ຽວກັບລັດທິສາສະໜາ ຕຳນານ ຄວາມເຊື່ອ ພິທີກຳ ອຸປະກອນ ແລະ ສະຖານທີ່ໃນການປະກອບກິດຈະກຳນັ້ນໆ.

**ປະລິນິບພານ** ນ. ການດັບທຸກທັງໝົດທັງປວງ, ການດັບກິເລດຕັນຫາທັງໝົດ, ການຕາຍຂອງພະພຸດທະເຈົ້າ ແລະ ພະອໍລະຫັນທັງຫຼາຍ ໜ. 534

**ອໍລະຫັດ** ນ. ຄວາມເປັນພະອໍລະຫັນຄືຜົນແຫ່ງຜູ້ເຖິງທຳວິເສດສູງສຸດໃນທາງພຸດທະສາສະໜາ ໜ. 828

**3.4 ໝວດຄຳກ່ຽວກັບຄວາມສຳພັນຂອງບຸກຄົນ**

1) ຄຳກ່ຽວກັບການຈຳແນກມະນຸດອອກເປັນກຸ່ມຕາມເຊື້ອຊາດ ເພດ ອາຍຸ ຄວາມສຳພັນໃນຄອບຄົວ ແລະ ເຄືອຍາດ

**ອາລະຍັນ** ນ. ຊົນຊາດເດີມເຊິ່ງເປັນຕົ້ນສະກຸນຂອງຊາວຮິນດູບູຮານ;ດີ,ງາມ,ຈະເລີນ ໜ. 815

**ຍາດຕິ-ຍາດຕິກາ** ນ. ພີ່ນ້ອງ ໜ.353

2) ຄຳກ່ຽວກັບການຄົມມະນາຄົມ ຕິດຕໍ່ສື່ສານ ວິທີການ ແລະ ອຸປະກອນຕ່າງໆໃນການສື່ສານ.

**ສັນຈອນ** ນ. ເດີນໄປ, ທ່ຽວໄປ ໜ.295

**ຄົມມະນາຄົມ** ນ. ການໄປ ແລະ ການມາ ຫຼື ການໄປມາ, ການຂົນສົ່ງໂດຍສານໄປມາ ທັງທາງນ້ຳ ແລະ ທາງບົກ ໜ.178

3) ຄຳກ່ຽວກັບເສດຖະກິດ ແລະ ການຄ້າ.

**ພານິດ** ນ. ການຄ້າຂາຍ ໜ. 593

**ພານິດຊະການ** ນ. ການຄ້າ ໜ.593

4) ຄຳກ່ຽວກັບການສົງຄາມ ການເມືອງ ການປົກຄອງ ວິທີການ ອຸປະກອນທີ່ກ່ຽວຂ້ອງ ແລະ ຕຳແໜ່ງໜ້າທີ່.

**ຍຸດທະພັນ** ນ. ເຄື່ອງໃຊ້ໃນການຮົບ ໜ.354

**ຍຸດໂທບາຍ** ນ. ອຸບາຍໃນການຮົບ ວິທີການປະຕິບັດແນວທາງນະໂຍບາຍການເມືອງ ເສດຖະກິດ ແລະ ສັງຄົມ ໜ.354

5) ຄຳກ່ຽວກັບສິລະປະດົນຕີ ການຫຼິ້ນ ກິລາ ການພະນັນ ແລະ ການພັກຜ່ອນຍ່ອນໃຈ ລວມທັງກົນລະວິທີ ແລະ ອຸປະກອນໃນການປະຕິບັດກິດຈະກຳນັ້ນໆ.

**ຕຸລິຍາງ** ນ. ສ່ວນຂອງເຄື່ອງດີດສີຕີເປົ່າ ໜ.388

**ວາທະກະ** ນ.ຜູ້ເສບດົນຕີ, ຜູ້ບັນເລງດົນຕີ ໜ. 713

6) ຄຳກ່ຽວກັບທີ່ຢູ່ອາໄສ ແລະ ເຄື່ອງມືເຄື່ອງໃຊ້ຕ່າງໆ.

**ເຄຫະ-ເຄຫາ** ນ. ເຮືອນ, ບ່ອນຢູ່, ສັບນີ້ໃຊ້ເປັນເຄຫັງ,ເຄເຫ, ເຄຫະ ໜ.150

**ທາລາເຄຫະ** ນ. ຫ້ອງອາບນ້ຳທີ່ມີຝັກບົວ, ຫ້ອງນ້ຳ ໜ.437

7) ຄໍາກ່ຽວກັບອາຫານ ເຄື່ອງດື່ມ ອຸປະກອນ ແລະ ວິທີປະກອບອາຫານ ລວມທັງຄຸນສົມບັດຂອງສານອາຫານຕ່າງໆ.

**ນິໂລດ** ອ. ຈືດ, ບໍ່ມີລົດ, ຈາງ, ບໍ່ແຊບ ໜ.475

**ໂພຊະນາຫານ** ນ.ສານອົງປະກອບສໍາຄັນຂອງອາຫານ ທີ່ເຮັດໃຫ້ອາຫານມີຄຸນຄ່າໃນການບໍາລຸງລ້ຽງຮ່າງກາຍ 602

ຈາກການສຶກສາລັກສະນະວັດທະນະທໍາພາສາແບ່ງອອກເປັນ 4 ໝວດໃຫຍ່ໄດ້ແກ່ ໝວດຄໍາກ່ຽວກັບທໍາມະຊາດ ມີຈໍານວນ 687 ຄໍາ ຄິດໄລ່ເທົ່າກັບ 18.59%, ໝວດຄໍາກ່ຽວກັບມະນຸດ ແລະ ພຶດຕິກໍາຂອງມະນຸດ ມີຈໍານວນ 617 ຄໍາ ຄິດໄລ່ເທົ່າກັບ 16.69%, ໝວດຄໍາກ່ຽວກັບສະຕິປັນຍາ ອາລົມ ຄວາມຮູ້ສຶກ ແລະ ຄຸນຄ່າ ມີຈໍານວນ 1.355 ຄໍາ ຄິດໄລ່ເທົ່າກັບ 36.67% ແລະ ໝວດຄໍາກ່ຽວກັບຄວາມສໍາພັນຂອງບຸກຄົນ ມີຈໍານວນ 1.036 ຄໍາ ຄິດໄລ່ເທົ່າກັບ 28.03 ສ່ວນຮ້ອຍ.

## 4. ວິພາກຜົນ

ສຶກສາວັດທະນະທໍາພາສາຂອງຄໍາຢືມທີ່ປາກົດໃນວັດຈະນານຸກົມພາສາລາວ ຂອງ ດຣ. ທອງຄໍາ ອ່ອນມະນີສອນ, 2008 ການສະແດງຈໍານວນຄໍາ ແລະ ສ່ວນຮ້ອຍທີ່ຈໍາແນກຕາມລັກສະນະທາງວັດທະນະທໍາພາສາຂອງຄໍາຢືມພາສາບາລີໃນວັດຈະນານຸກົມພາສາລາວ ພົບວ່າ ຄໍາຢືມພາສາບາລີໃນໝວດຄໍາກ່ຽວກັບ ສະຕິປັນຍາ ອາລົມ ຄວາມຮູ້ສຶກ ແລະ ຄຸນຄ່າ ມີຈໍານວນຫຼາຍທີ່ສຸດ; ໂດຍແຍກໝວດຄໍາຍ່ອຍ ຂອງຄໍາຢືມພາສາບາລີ ພົບວ່າ ຄໍາກ່ຽວກັບ ລັດທິສາສະໜາ ຕໍານານ ຄວາມເຊື່ອ ພິທີກໍາ ອຸປະກອນ ແລະ ສະ ຖານທີ່ໃນການປະກອບກິດຈະກໍານັ້ນໆ ມີຈໍານວນຫຼາຍທີ່ສຸດ ແລະ ໝວດຄໍາກ່ຽວກັບມະນຸດ ແລະ ພຶດຕິກໍາຂອງມະນຸດ ມີຈໍານວນໜ້ອຍທີ່ສຸດ ໂດຍແຍກໝວດຄໍາຍ່ອຍຂອງຄໍາຢືມພາສາບາລີ ພົບວ່າ ຄໍາກ່ຽວກັບການແຕ່ງກາຍ ແລະ ເຄື່ອງປະດັບ ໝວກ ຊົງຜົມ ເກີບ ອຸປະກອນ ແລະ ວິທີການແຕ່ງກາຍ ລວມທັງການທໍາຄວາມສະອາດຮ່າງກາຍ ມີຈໍານວນໜ້ອຍທີ່ສຸດ ສອດຄ່ອງກັບງານວິໄຈຂອງຫຼາຍທ່ານ ເຊັ່ນ: ງານວິໄຈຂອງ Kulrat (2535) ທີ່ສຶກສາຄໍາຢືມໃນພົດຈະນານຸກົມອິສານໂດຍມີຈຸດປະສົງເພື່ອສໍາຫຼວດ ແລະ ຈັດໝວດໝູ່ຄໍາຢືມ ແລະ ເພື່ອສຶກສາການປ່ຽນແປງທາງດ້ານຮູບຄໍາ ແລະ ຄວາມໝາຍຂອງຄໍາຢືມຜົນການສຶກສາພົບວ່າ ຄໍາຢືມພາສາບາລີມີຈໍານວນຫຼາຍທີ່ສຸດ ແລະ ໜ້ອຍທີ່ສຸດຄືພາສາຍວນ. ສອດຄ່ອງກັບງານວິໄຈຂອງ Kongseng (2547) ທີ່ສຶກສາຄໍາຢືມທີ່ປາກົດໃນໄຕພູມພະລ່ວງ ໂດຍມີມີຈຸດປະສົງເພື່ອສໍາຫຼວດຄໍາຢືມ ແລະ ວິເຄາະຄໍາຢືມທີ່ປາກົດໃນໄຕພູມພະລ່ວງ ຜົນການສຶກສາພົບວ່າ ຄໍາຢືມພາສາບາລີມີຈໍານວນຫຼາຍທີ່ສຸດ ແລະ ພົບໜ້ອຍທີ່ສຸດຄືຄໍາຢືມພາສາຂະແມ. ສອດຄ່ອງກັບ Wipolchai (2558) ໄດ້ສຶກສາລັກສະນະຄໍາຢືມພາສາບາລີສັນສະກິດໃນວັນນະກໍາທ້ອງຖິ່ນພາກໃຕ້ ເລື່ອງພະມະຫາຊາດົກຄໍາກາບ ຜົນການສຶກສາພົບວ່າ ຄໍາພາສາບາລີສັນສະກິດທີ່ໃຊ້ໃນວັນນະກໍາທ້ອງຖິ່ນພາກໃຕ້ເລື່ອງພະມະຫາຊາດົກຄໍາກາບເປັນຄໍາຢືມທີ່ມາຈາກພາສາບາລີ ຫຼາຍກວ່າຄໍາຢືມທີ່ມາຈາກພາສາສັນສະກິດ, ຍັງສອດຄ່ອງກັບງານວິໄຈຂອງ Jirasawatwong (2021) ໄດ້ສຶກສາກ່ຽວກັບ Pali and Sanskrit Loan Words in Samutthrakhot Khamchan : An Analysis Forms and Meanings ມີຈຸດປະສົງເພື່ອວິເຄາະຮູບຄໍາຢືມພາສາບາລີສັນສະກິດທີ່ປາກົດໃນວັນນະຄະດີເລື່ອງສະມຸດໂຄດຄໍາສັນ ແລະ ເພື່ອຈໍາແນກປະເພດຄວາມໝາຍຂອງຄໍາຢືມພາສາບາລີສັນສະກິດ ຜົນການສຶກສາພົບວ່າການຈໍາແນກຄວາມໝາຍກຸ່ມສັບພະສິ່ງມີຈໍານວນຫຼາຍທີ່ສຸດ, ສອດຄ່ອງກັບງານວິໄຈຂອງ Pramualsinchai (2532) ທີ່ສຶກສາວັດທະນະທໍາຂອງຄໍາຢືມທີ່ປາກົດໃນພົດຈະນານຸກົມ ສະບັບຣາຊະບັນດິດສະຖານ ພ.ສ 2525 ໂດຍມີຈຸດມຸ່ງໝາຍເພື່ອສໍາຫຼວດຄໍາຢືມຈາກພາສາຕ່າງປະເທດຈັດໝວດໝູ່ ແລະ ວິເຄາະຄໍາຢືມພາສາຕ່າງປະເທດທີ່ປາກົດໃນພົດຈະນານຸກົມ ສະບັບຣາ

ຊະບັນດິດສະຖານ ພ.ສ 2525 ຕາມແບບການແບ່ງ ວັດທະນະທຳພາສາ ຂອງໂວຈິລິນ (Voegelins) ຜົນການສຶກສາ ພົບວ່າ ມີຄຳຢືມຈາກພາສາຕ່າງປະເທດ ການສຶກສາພົບວ່າ ຄຳຢືມໃນໝວດຄຳກ່ຽວກັບທຳມະຊາດມີຈຳນວນຫຼາຍທີ່ສຸດ ແລະ ຄຳຢືມໃນໝວດຄຳກ່ຽວກັບມະນຸດ ແລະ ພຶດຕິກຳຂອງມະນຸດມີຈຳນວນໜ້ອຍທີ່ສຸດ. ສອດຄ່ອງກັບງານວິໄຈຂອງ Deepphonngam (2541) ໄດ້ສຶກສາການປ່ຽນແປງຂອງຄຳນາມ ໂດຍການນສຶກສາຈາກອັກຂະຫຼະທິຖານສັບຂອງໝໍປຣັດ ແລະ ພົດຈະນານຸກົມສະບັບຣາຊະບັນດິດສະ ຖານ ພ.ສ 2525 ຜົນການສຶກສາພົບວ່າ ໝວດຄຳພົບຫຼາຍທີ່ສຸດໃນຄຳນາມທີ່ເພີ່ມຂຶ້ນ ແລະ ສູນເສຍໄປຄືໝວດຄຳທີ່ກ່ຽວກັບທຳມະຊາດ ແລະ ພົບໜ້ອຍທີ່ສຸດໃນຄຳນາມທີ່ເພີ່ມຂຶ້ນຄື ໝວດຄຳກ່ຽວກັບມະນຸດ ແລະ ພຶດຕິກຳຂອງມະນຸດ, ງານວິໄຈຂອງ Deepphonngam (2541) ອ້າງອີງຈາກ Ngamsutdi (1983) ໄດ້ສຶກສາຄຳຢືມພາສາສັນສະກິດໃນພາສາໄທ ແລະ ພາສາຕາກາລ໊ອກ ຜົນການສຶກສາ ພົບວ່າ ໝວດຄຳກ່ຽວກັບມະນຸດມີຈຳນວນຮ້ອຍລະສູງທີ່ສຸດຂອງຄຳຢືມພາສາສັນສະກິດໃນພາສາໄທ ແລະ ພາສາຕາກາລ໊ອກໃນພາສາໄທ ມີຄຳຢືມພາສາສັນສະກິດທີ່ກ່ຽວຂ້ອງກັບສາສະໜາຫຼາຍເປັນອັນດັບຮອງຈາກຄຳກ່ຽວກັບມະນຸດ ແລະ ຍັງສອດຄ່ອງກັບງານຄົ້ນຄວ້າຂອງ Sysouphanh (2021) ພົບວ່າ ຄຳປະສົມທີ່ເປັນຄຳນາມທີ່ເປັນຄວາມໝາຍກົງ ໃນໝວດກ່ຽວກັບທຳມະຊາດຫຼາຍທີ່ສຸດ ສ່ວນຄຳປະສົມທີ່ເປັນຄຳນາມທີ່ເປັນຄວາມໝາຍກົງໃນໝວດຄຳກ່ຽວກັບສະຕິປັນຍາ, ອາລົມ ແລະ ຄຸນຄ່າໜ້ອຍທີ່ສຸດ, ໃນດ້ານຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍແຝງໃນໝວດກ່ຽຍວກັບທຳມະຊາດຫຼາຍທີ່ສຸດ ສ່ວນຄຳປະສົມທີ່ເປັນຄຳນາມທີ່ເປັນຄວາມໝາຍແຝງໃນໝວດຄຳກ່ຽວກັບສະຕິປັນຍາ, ອາລົມ ແລະ ຄຸນຄ່າໜ້ອຍທີ່ສຸດ.

**5. ສະຫຼຸບ**

ຜ່ານການສຶກສາວັດທະນະທຳພາສາຂອງຄຳຢືມທີ່ປາກົດໃນວັດຈະນານຸກົມພາສາລາວ ມີຄວາມມຸ່ງໝາຍເພື່ອສຳຫຼວດຄຳຢືມຈາກພາສາບາລີ ແລະ ເພື່ອຈັດໝວດໝູ່ວັດທະນະທຳທາງພາສາຄຳຢືມພາສາບາລີທີ່ປາກົດວັດຈະນານຸກົມພາສາລາວຂອງ ດຣ. ທອງຄຳ ອ່ອນມະນີສອນ 2008. ເຊິ່ງສະຫຼຸບຜົນການສຶກສາດັ່ງນີ້ ຄຳຢືມພາສາບາລີທີ່ປາກົດໃນວັດຈະນານຸກົມລາວຂອງ ດຣ.ທອງຄຳ ອ່ອນມະນີສອນ ພົບວ່າມີຈຳນວນທັງໝົດ 3,695 ຄຳສັບ ໂດຍຈຳແນກລັກສະນະວັດທະນະທຳພາສາແບ່ງອອກເປັນ 4 ໝວດໃຫຍ່ ໄດ້ແກ່ ໝວດຄຳກ່ຽວກັບທຳມະຊາດ, ໝວດຄຳກ່ຽວກັບມະນຸດ ແລະ ພຶດຕິກຳຂອງມະນຸດ, ໝວດຄຳກ່ຽວກັບສະຕິປັນຍາ ອາລົມ ຄວາມຮູ້ສຶກ ແລະ ຄຸນຄ່າ ແລະ ໝວດຄຳກ່ຽວກັບຄວາມສຳພັນຂອງບຸກຄົນ.

**6. ຂໍ້ຂັດແຍ່ງ**

ພວກຂ້າພະເຈົ້າ ໃນນາມຄະນະຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ້ງທາງຜົນປະໂຫຍດກັບພາກສ່ວນໃດ ບໍ່ໄດ້ເອື້ອຜົນປະໂຫຍດກັບພາກສ່ວນໃດໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ພວກຂ້າພະເຈົ້າ ມີຄວາມຍິນດີຮັບຜິດຊອບແຕ່ພຽງຜູ້ດຽວ.

**7. ເອກະສານອ້າງອີງ**

Chaluay, S. (2559). *Basic knowledge about Pasa Pali and Sanskrit*. Unolarachathani: Textbook Project Information about Thai language Faculty of Humanities Ubon Ratchathani Rajabhat University

Deepphonngam, J. (2541). *Study the changes of nouns*. degree thesis Master of Education Thai Language Program Mahasarakham University.

Deshvongsa, S. ( 1972) . *Research the Lao language*.

Jaiklum, S. (2549). *A study of lexical changes and meanings of Pali-Sanskrit words in a dictionary Royal Academy B.E 2525 and B.E 2542*. Master of Arts Thesis, Program in Thai Language, Naresuan University.

Jirasawatwong, B. (2021). *Pali and Sanskrit Loan Words in Samutthrakhot Khamchan* :

An Analysis Forms and Meanings. 3 Program of Thai Language, Faculty of Humanities and Social Sciences, Pibulsongkhram Rajabhat University Phitsanulok, Thailand.

Kaewku, J. (2545). *Grammatical characteristics of loanwords from Pali and Sanskrit appearing in Phra Pathom Sombodhikatha*. Master of Arts Thesis, Graduate School, Mahasarakham University

Kongseng, K. (2547). *Borrowing words appearing in Trai Phum Phra Ruang*. Master of Arts Thesis, Program in Thai Language, Graduate School, Naresuan University.

Kulrat, W. (2535). *Loan words in the Isaan dictionary*. Mahasarakham University. Mahasarakham (Thailand). Graduate School.

Mapa, M. (2559). *Foreign languages in Thai*. Faculty of Humanities and Social Sciences, Udon Thani Rajabhat University.

Onmanison. T. (2008). *Lao Dictionary*.

Panthumetha, B. (2517). *Pali Sanskrit in Thai language*. Ramkhamhaeng University, Bangkok

Petcharat, J, & Thongbai, A. (2559). foreign language in Thai. Bangkok.

Petcharat, W. (2553). *A collection of Pali vocabulary in Thai subjects at the secondary leve*l. Educational Testing Institute.

Pramualsinchai, N. T. (2532). *The language culture of loan words that appear in dictionaries*. Royal Institute Edition. Master of Education Thesis, Program in Thai Language, Graduate School, Srinakharinwirot University.

Sengyi, P. (2557). *The study of new words in the dictionary Royal Institute Edition*. This thesis is part of the study of the Master of Arts degree program, Thai Language Program Silpakorn University.

Souvanhny, S. (2015). *Pali-Lao Dictionary*. Si Sawat Printing House

Sukkhasem, S. (2016). *Foreign language in Lao language*. Gather technical articles on Lao language- literature-culture. Faculty of Letters, National University.

Sysouphanh, S. (2021). *The study of compound nouns in the dictionary* Souphanouvong Journal of Multidisciplinary Research and Development ISSN 2521-0653. Volume 7. Issue 1. Jan – Jun 2021. Page 186 - 196.

Viravongs, S. (2549). *Lao Dictionary*. printing press. New updated version.

Vongvichid, P. (1991). *Lao grammar*. The central office of the Lao National Front.

Wipolchai, N. (2558). An Analytical Study of Pali and Sanskrit Loanwordsin Phramahajataka Khamkab, A Southern Thai Literary Work

Xayavong, S. (2005). *Study the loanwords in the Lao language*. Linguistic Research Institute. Ministry of Information and Culture.

Xayavong, S. (2015). *Lao Dictionary*. National Institute of Social Sciences

**ຕາຕະລາງ 1.** ຕາຕະລາງສະແດງຈຳນວນໝວດໝູ່ຄວາມໝາຍຂອງຄຳສັບໃນວັດຈະນານຸກົມພາສາລາວ ຂອງ ດຣ. ທອງຄຳ ອ່ອນມະນີສອນ, ປີ 2008.

| ໝວດໝູ່ທາງຄວາມໝາຍ | | ຈຳນວນ | ສ່ວນຮ້ອຍ |
|---|---|---|---|
| **1. ໝວດຄຳກ່ຽວກັບທຳມະຊາດ** | | **687** | **18,59%** |
| 1.1 | ຄຳກ່ຽວກັບພູມປະເທດ ຊັບພະຍາກອນທຳມະຊາດທີ່ບໍ່ມີຊີວິດ ຄຸນສົມບັດ ອຸປະກອນ ແລະວິທີນຳຊັບພະຍາກອນທຳມະຊາດມາໃຊ້. | 96 | 2.59 |

| | | | |
|---|---|---|---|
| 1.2 | ຄຳກ່ຽວກັບທ້ອງຟ້າ ດວງດາວ ອຸນຫະພູມ ລະດູການ ປາກົດການທຳມະຊາດທີ່ເກີດຈາກທ້ອງຟ້າ ຄຸນສົມບັດ ແລະ ວິທີການສຶກສາກ່ຽວກັບທ້ອງຟ້າ | 117 | 3.16 |
| 1.3 | ຄຳກ່ຽວກັບພະລັງງານ, ຄວາມຮ້ອນ, ແສງສະຫວ່າງ, ໄຟ, ວັດສະດຸ ອຸປະກອນທີ່ເຮັດໃຫ້ເກີດພະລັງງານ | 29 | 0.78 |
| 1.4 | ຄຳກ່ຽວກັບສັດ, ຊະນິດ, ປະເພດ, ອະໄວຍະວະຕ່າງໆຂອງສັດ ການລ້ຽງດູ, ການລ່າສັດ, ອຸປະກອນໃນການລ້ຽງ ແລະ ການລ່າສັດ. | 130 | 3.51 |
| 1.5 | ຄຳກ່ຽວກັບພືດ, ຊະນິດ, ປະເພດ, ສ່ວນປະກອບຂອງພືດ, ການປູກ, ການບຳລຸງຮັກສາ, ການຂະຫຍາຍພັນ ແລະ ອຸປະກອນໃນການເພາະປູກ ແລະ ຂະຫຍາຍພັນ. | 108 | 2.92 |
| 1.6 | ຄຳກ່ຽວກັບວັນ, ເວລາ | 106 | 2.86 |
| 1.7 | ຄຳກ່ຽວກັບທິດທາງ, ຈຳນວນ, ຂະໜາດ, ບໍລິມາດ, ມາດຕາຊັ່ງ, ຕວງ, ວັດ ລະຍະທາງ, ລຳດັບທີ່ ອຸປະກອນ ແລະ ວິທີການໃນການຊັ່ງ ຕວງ ວັດ ແລະ ການຄຳນວນ | 101 | 2.73 |
| **2. ໝວດຄຳກ່ຽວກັບມະນຸດ ແລະ ພຶດຕິກຳຂອງມະນຸດ** | | **617** | **16.69%** |
| 2.1 | ຄຳກ່ຽວກັບອະໄວຍະວະຕ່າງໆ ພາວະການປ່ຽນແປງພາຍໃນຮ່າງກາຍ | 147 | 3.97 |
| 2.2 | ຄຳກ່ຽວກັບພັດທະນາການຂອງຮ່າງກາຍ ສຸຂະພາບ ການຮັກສາພະຍາບານ ອຸປະກອນ ແລະ ວິທີການຮັກສາພະຍາບານ | 129 | 3.49 |
| 2.3 | ຄຳກ່ຽວກັບການແຕ່ງກາຍ ແລະ ເຄື່ອງປະດັບ ໝວກ ຊິ້ງຜົມ ເກີບ ອຸປະກອນ ແລະ ວິທີການແຕ່ງກາຍ ລວມທັງການທຳຄວາມສະອາດຮ່າງກາຍ | 27 | 0.73 |
| 2.4 | ຄຳກ່ຽວກັບການຮັບຄວາມຮູ້ສຶກທາງປະສາດສຳຜັດຂອງຮ່າງກາຍ ເຊັ່ນ ການເຫັນ ຮູ້ລົດ ໄດ້ກິ່ນ ໄດ້ຍິນ ການສະແດງຄວາມເປັນເຈົ້າຂອງ ການກະທົບກະແທກ ການປົກປິດເປີດເຜີຍ | 191 | 5.16 |
| 2.5 | ຄຳກ່ຽວກັບກິດຈະກຳ ການເຄື່ອນໄຫວ ແລະ ການເຄື່ອຍຍ້າຍໃນລັກສະນະຕ່າງໆ | 123 | 3.32 |
| **3. ໝວດຄຳກ່ຽວກັບສະຕິປັນຍາ ອາລົມ ຄວາມຮູ້ສຶກ ແລະ ຄຸນຄ່າ** | | **1,355** | **36.67%** |
| 3.1 | ຄຳກ່ຽວກັບຈິດໃຈ ອາລົມ ຄວາມຮູ້ສຶກນຶກຄິດ | 257 | 6.95 |
| 3.2 | ຄຳກ່ຽວກັບຄຸນຄ່າ ຄ່ານິຍົມ ແລະ ການຮຽນຮູ້ | 172 | 4.56 |
| 3.3 | ຄຳກ່ຽວກັບລັດທິສາສະໜາ ຕຳນານ ຄວາມເຊື່ອ ພິທີກຳ ອຸປະກອນ ແລະ ສະຖານທີ່ໃນການປະກອບກິດຈະກຳນັ້ນໆ | 926 | 25.06 |
| **4. ໝວດຄຳກ່ຽວກັບຄວາມສຳພັນຂອງບຸກຄົນ** | | **1,036** | **28.03%** |
| 4.1 | ຄຳກ່ຽວກັບການຈຳແນກມະນຸດອອກເປັນກຸ່ມຕາມເຊື້ອຊາດ ເພດ ອາຍຸ ຄວາມສຳພັນໃນຄອບຄົວ ແລະ ເຄືອຍາດ | 194 | 5.25 |
| 4.2 | ຄຳກ່ຽວກັບການຄົມມະນາຄົມຕິດຕໍ່ສື່ສານ ວິທີການ ແລະ ອຸປະກອນຕ່າງໆໃນການສື່ສານ | 168 | 4.54 |
| 4.3 | ຄຳກ່ຽວກັບເສດຖະກິດ ແລະ ການຄ້າ | 52 | 1.40 |

| | | | |
|---|---|---|---|
| 4.4 | ຄຳກ່ຽວກັບການສົງຄາມ ການເມືອງ ການປົກຄອງ ວິທີການ ອຸປະກອນທີ່ກ່ຽວຂ້ອງ ແລະ ຕຳແໜ່ງໜ້າທີ່ | 383 | 10.36 |
| 4.5 | ຄຳກ່ຽວກັບສິລະປະດົນຕີ ການຫຼິ້ນ ກິລາ ການພະນັນ ແລະ ການພັກຜ່ອນຍ່ອນໃຈ ລວມທັງກົນລະວິທີ ແລະ ອຸປະກອນໃນການປະຕິບັດກິດຈະກຳນັ້ນໆ | 57 | 1.54 |
| 4.6 | ຄຳກ່ຽວກັບທີ່ຢູ່ອາໄສ ແລະ ເຄື່ອງມືເຄື່ອງໃຊ້ຕ່າງໆ | 114 | 3.08 |
| 4.7 | ຄຳກ່ຽວກັບອາຫານ ເຄື່ອງດື່ມ ອຸປະກອນ ແລະ ວິທີປະກອບອາຫານ ລວມທັງ ຄຸນສົມບັດຂອງສານອາຫານຕ່າງໆ. | 68 | 1.84 |
| **ລວມ** | | **3.695** | **100** |